ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ

ກອງທຶນສົ່ງເສີມ ຈບນກ ເລກທີ 0518./ທສວ

ນະຄອນຫຼວງວຽງຈັນ, ວັນທີ .08. ພຶດສະພາ 2025

**ໜັງສືແຈ້ງເລື່ອນຍື່ນເຈດຈຳນົງຄວາມສົນໃຈ**
**ສຳລັບການບໍລິການສ້າງເວັບໄຊ www.msmepa.org ຂອງ ສຈບນກ ແລະ ສ້າງເວັບໄຊຂອງ ທສວ**

1. ກອງທຶນສົ່ງເສີມຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ (ທສວ), ກະຊວງອຸດສາຫະກຳ ແລະ ການຄ້າ ຂໍແຈ້ງເລື່ອນຍື່ນໜັງສືເຈດຈຳນົງຄວາມສົນໃຈ ສຳລັບການບໍລິການ ສ້າງເວັບໄຊ www.msmepa.org ຂອງ ສຈບນກ ແລະ ສ້າງເວັບໄຊຂອງ ທສວ;
2. ການບໍລິການທີ່ປຶກສາ " ການບໍລິການ" ລວມເອົາການສະໜອງຂອງທີມງານ ຂອງບໍລິສັດທີ່ປຶກສາທີ່ປະຕິບັດການບໍລິການທີ່ຕ້ອງການ *[ບໍລິການພັດທະນາເວັບໄຊ, ຖານຂໍ້ມູນ, ການຂຽນໂປແກຣມ, ການອອກແບບ UX/UI, ການເຮັດ SEO, CM];*
3. ສຳລັບໜ້າວຽກທີ່ຈະມອບໝາຍ (TOR) ລາຍລະອຽດ ສາມາດພົວພັນເອົາເອກະສານໄດ້ຢູ່ທີ່ຊັ້ນ 03 ຫ້ອງ 301 ຂອງຫ້ອງການສຳນັກງານສົ່ງເສີມຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ, ກະຊວງອຸດສາຫະກຳ ແລະ ການຄ້າ, ເບີໂທ 021 410005, 020 2309 8876;
4. ທສວ ຂໍເຊີນບໍລິສັດທີ່ປຶກສາ " ທີ່ປຶກສາ" ທີ່ມີຄວາມສົນໃຈ ຍື່ນໜັງສືສະແດງຄວາມສົນໃຈຂອງຕົນ ເພື່ອສະໜອງການບໍລິການດັ່ງກ່າວ. ບໍລິສັດທີ່ມີຄວາມສົນໃຈ ຕ້ອງສະໜອງຂໍ້ມູນທີ່ສະແດງເຖິງຄວາມເໝາະສົມໃນການສະໜອງການບໍລິການ ທີ່ມີຄຸນວຸດທິ ແລະ ມີປະສົບການທີ່ກ່ຽວຂ້ອງ ໃນການປະຕິບັດການບໍລິການດັ່ງກ່າວ. ມາດຖານການຄັດເລືອກບໍລິສັດເຂົ້າໃນບັນຊີຄັດເລືອກ (ບັນຊີສັ້ນ) ສຳລັບການບໍລິການບໍລິສັດທີ່ປຶກສາຕ້ອງປະກອບເອກະສານດັ່ງນີ້:
   - ໃບທະບຽນວິສາຫະກິດ (ໃບອະນຸຍາດດຳເນີນທຸລະກິດ) ເປັນບໍລິສັດເອກະລາດ ສຳລັບວຽກງານບໍລິການທີ່ກ່ຽວຂ້ອງ;
   - ໃບຢັ້ງຢືນການເສຍອາກອນ ປະຈຳປີ 2024 ຫຼື 2023;
   - ສະໜອງຂໍ້ມູນກ່ຽວກັບປະສົບການຢ່າງນ້ອຍ 05 ປີ ພ້ອມທັງສະແດງຫຼັກຖານຄວາມສຳເລັດໃນການບໍລິການ ທີ່ມີລັກສະນະຄ້າຍຄືກັນຢ່າງໜ້ອຍ 03 ສັນຍາ ທີ່ພົວພັນກັບ [ການພັດທະນາເວັບໄຊ, ຖານຂໍ້ມູນ, ການຂຽນໂປແກມ, ການອອກແບບ UX/UI, ການເຮັດ SEO, CMS] ໂດຍສະເພາະການບໍລິການທີ່ປຶກສາພາຍໃນປະເທດ ຫຼື ໃນບັນດາກະຊວງຕ່າງໆ;
   - ສະໜອງໂຄງຮ່າງການຈັດຕັ້ງ ແລະ ບັນຊີລາຍຊື່, ຊີວະປະຫວັດຂອງຜູ້ຊ່ຽວຊານ ຫຼື ຫົວໜ້າທີມງານ ແລະ ພະນັກງານຫຼັກ ເພື່ອເປັນຂໍ້ມູນໃນການຂະບວນການຄັດເລືອກເຂົ້າໃນບັນຊີ (ບັນຊີສັ້ນ).

5. ບໍລິສັດທີ່ປຶກສາຈະຖືກຄັດເລືອກຕາມຮູບແບບຈັດຈ້າງ *[ຕາມງົບປະມານຕົວຈິງ (FBS)]* ຕາມຫຼັກການຈັດຊື້-ຈັດຈ້າງ ສຳລັບງົບປະມານຂອງລັດ ທີ່ກຳນົດໄວ້ໃນບົດແນະນຳການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ ເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019;
6. ເອກະສານການສະແດງຄວາມສົນໃຈ ຕ້ອງສົ່ງເຖິງທີ່ຢູ່ຂ້າງລຸ່ມນີ້ ແລະ ປິດຮັບເອກະສານສະແດງຄວາມສົນໃຈ ໃນວັນທີ 23 ພຶດສະພາ 2025 ສົ່ງຢູ່ທີ່ຊັ້ນ 03, ຫ້ອງ 301 ຂອງສຳນັກງານສົ່ງເສີມຈຸນລະວິສາຫະກິດວິສາຫະກິດຂະໜາດນ້ອຍ ແລະ ກາງ, ກະຊວງອຸດສາຫະກຳ ແລະ ການຄ້າ, ເບີໂທ 021 410005, 020 2309 8876 (ໃນໂມງລັດຖະການ 8:30 ໂມງ ຫາ 16:00 ໂມງ, ວັນຈັນ ເຖິງ ວັນສຸກ)

ຜູ້ອຳນວຍການກອງທຶນ

ປອ. ບຸນເພັງ ສີບຸນເຮືອງ